ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ ເລກທີ 1102 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 31 ພຶດສະພາ 2024

# ປະກາດຮັບສະໝັກສອບເສັງລັດຖະກອນໃໝ່

ກົມຈັດຕັ້ງ ແລະ ພະນັກງານ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານທີ່ມີຄວາມສົນໃຈຢາກສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ ຂອງກະຊວງການເງິນ ປີ 2024 ຊາບວ່າ: ກະຊວງການເງິນ ຈະໄດ້ຈັດຕັ້ງການສອບເສັງບັນຈຸລັດຖະກອນໃໝ່ **ຈຳນວນ 12 ໂກຕ້າ** ເພື່ອຄັດເລືອກເອົາຜູ້ທີ່ມີຄວາມຮູ້ ແລະ ຄວາມສາມາດ ປະກອບເຂົ້າໃສ່ຕຳແໜ່ງງານທີ່ຍັງຫວ່າງຢູ່ ບັນດາກົມ ແລະ ຂະແໜງການເງິນຢູ່ຂັ້ນທ້ອງຖິ່ນ ລາຍລະອຽດດັ່ງນີ້:

**I. ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມສະໝັກສອບເສັງ ມີດັ່ງນີ້:**

1. ຕ້ອງຮຽນຈົບລະດັບວິຊາສະເພາະ ຊັ້ນສູງ ຂຶ້ນໄປ ຢູ່ພາຍໃນ ຫຼື ຕ່າງປະເທດ ໃນສາຂາວິຊາ **ການເງິນ-ການບັນຊີ ແລະ ເສດຖະສາດ** ທີ່ມີຄະແນນສະເລ່ຍ **3,00** ຫຼື ເກຣດ **B** ຂຶ້ນໄປ;
2. ເປັນພົນລະເມືອງລາວຖືສັນຊາດລາວ, ເພດ: ຊາຍ ຫຼື ຍິງ ມີອາຍຸ 18 ປີ ຂຶ້ນໄປ ແຕ່ບໍ່ເກີນ 35 ປີ;
3. ບໍ່ເຄີຍຖືກສານຕັດສິນລົງໂທດ, ຕັດອິດສະຫຼະພາບ, ບໍ່ເຄີຍຖືກວິໄນໄລ່ອອກຈາກອົງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ລັດວິສາຫະກິດ ຫຼື ອົງການຈັດຕັ້ງສາກົນ;
4. ມີສຸຂະພາບແຂງແຮງ, ມີມະນຸດສຳພັນດີ, ມີຄວາມອົດທົນ ແລະ ສັດຊື່ບໍລິສຸດ.

**II. ການພິວພັນ, ຄ່າທຳນຽມ, ວັນ, ເວລາ ແລະ ສະຖານທີ່ຮັບຄຳຮ້ອງສະໝັກສອບເສັງ ມີດັ່ງນີ້:**

1. ໃຫ້ພິວພັນ ແລະ ຍື່ນເອກະສານສະໝັກສອບເສັງດ້ວຍຕົນເອງ ຢູ່ທີ່ ສະຖາບັນການເງິນ ແລະ ການບັນຊີ **(ດົງຄຳຊ້າງ)** ນະຄອນຫຼວງວຽງຈັນ ແລະ ບໍ່ອະນຸຍາດໃຫ້ບຸກຄົນອື່ນມາພິວພັນຮັບ-ຍື່ນເອກະສານແທນ;
2. ເລີ່ມພິວພັນ ແລະ ຮັບເອກະສານສະໝັກສອບເສັງ ນັບແຕ່ວັນທີ 03 ມິຖຸນາ 2024 ເປັນຕົ້ນໄປ (ກຳນົດ 05 ວັນ ລັດຖະການ) ແລະ ປິດຮັບຄຳຮ້ອງ ວັນທີ 07 ມິຖຸນາ 2024 (ເວລາ 16:00 ໂມງ).
3. ຄ່າທຳນຽມລົງທະບຽນເຂົ້າຮ່ວມສອບເສັງ ຄົນລະ **50.000 ກີບ (ຫ້າສິບພັນກີບ)**
4. ສາມາດດາວໂຫຼດໜັງສືຄຳຮ້ອງສະໝັກເຂົ້າສອບເສັງໄດ້ທາງເວບໄຊ໌ ກະຊວງການເງິນ **www.mof.gov.la;**
5. ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ກົມຈັດຕັ້ງ ແລະ ພະນັກງານ ກະຊວງການເງິນ ໂທ 020 22222883.

**III. ເອກະສານປະກອບຄຳຮ້ອງສະໝັກສອບເສັງ ມີດັ່ງນີ້:**

1. ໜັງສືຄຳຮ້ອງສະໝັກເຂົ້າສອບເສັງ (ຂອງກະຊວງການເງິນ) 01 ຊຸດ;
2. ສຳເນົາໃບປະກາສະນີຍະບັດ ແລະ ໃບຄະແນນ ຢ່າງລະ 01 ຊຸດ;
3. ຊີວະປະຫວັດຫຍໍ້ທົ່ວໄປ 01 ຊຸດ;
4. ສຳເນົາປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ ຢ່າງລະ 01 ຊຸດ;
5. ຮູບຖ່າຍບໍ່ເກີນ 03 ເດືອນ (ຂະໜາດ 3x4) ພື້ນສີຂາວ 02 ໃບ;

**IV. ການສັບຊ້ອນ:** ພາຍຫຼັງສອບເສັງໄດ້ ກະຊວງການເງິນຈະສັບຊ້ອນຜູ້ທີ່ສອບເສັງໄດ້ ໄປສັງກັດຢູ່ບັນດາກົມ ແລະ ຂະແໜງການເງິນຢູ່ຂັ້ນທ້ອງຖິ່ນ ຕາມຕຳແໜ່ງງານທີ່ຕ້ອງການຕົວຈິງ, ຖ້າຜູ້ທີ່ສອບເສັງໄດ້ ບໍ່ໄປຕາມການສັບຊ້ອນຂອງກະຊວງການເງິນ ຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

**ຫົວໜ້າກົມ**

ກົມຈັດຕັ້ງ ແລະ ພະນັກງານ

**ກົງຄຳ ສິດທິວໍລະດາ**